ບ້ານລ້ຽງຈອງ

ການວາງແຜນຮ່ວມກັບຊຸມຊົນ

ໂຄງການ ປັບປຸງກະສິກຳຮອບດ້ານ ເພື່ອປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ເມືອງພູກູດ (PICRAIL) ມີຈຸດປະສົງແນ່ໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໂດຍລວມ, ການພັດທະນາຊົນນະບົດ, ແລະ ການຫຼຸດຜ່ອນຄວາມທຸກຍາກໃນ ສປປ ລາວ ໂດຍການເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ ຜ່ານການຜະລິດກະສິກຳສະອາດ, ປອດໄພ, ຍືນຍົງ ແລະ ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ.

ໃນເດືອນ ມີຖຸນາ 2019 ຜ່ານມາ ໂຄງການ PICRAIL ໄດ້ລົງວາງແຜນຮ່ວມກັບປະຊາຊົນບ້ານລ້ຽງຈອງ ເພື່ອສຶກສາຄວາມຕ້ອງການ ແລະ ສ້າງແຜນຈັດຕັ້ງປະຕິບັດຮ່ວມກັບຊຸມຊົນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 64 ຄົນ (ຍິງ 33 ຄົນ) ແລະ ສາມາດສັງລວມຂໍ້ມູນໄດ້ 6 ດ້ານຫຼັກຄື:

ໝາຍເຫດ: ຂໍ້ມູນນີ້ແມ່ນອີງໃສ່ຄວາມຮູ້, ຄວາມເຂົ້າໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ເຊິ່ງອາດຈະຄາດເຄື່ອນຈາກຂໍ້ມູນທາງການ ແຕ່ກໍສະແດງໃຫ້ເຫັນມຸມມອງຂອງຊຸມຊົນກ່ຽວກັບສະພາບ, ບັນຫາ, ຄວາມຕ້ອງການ ແລະ ການສະເໜີຂອງຊຸມຊົນ

ADRA

german cooperation
DEUTSCHE ZUSAMMENARBEIT

ອົງການ ອາດຣາ (ADRA) ພາຍໃຕ້ໂຄງການ ປັບປຸງກະສິກຳຮອບດ້ານ ເພື່ອປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ການຍົກລະດັບຊີວິດການເປັນຢູ່ຂອງ ປະຊາຊົນ ເມືອງພູກູດ, ແຂວງຊຽງຂວາງ (PICRAIL) ໄດ້ຈັດຕັ້ງປະຕິບັດກິດຈະກຳ ການວາງແຜນແບບມີສ່ວນຮ່ວມກັບຊຸມຊົນ ຈຳນວນ 16 ບ້ານເປົ້າໝາຍ. ຜູ້ເຂົ້າຮ່ວມລວມມີຊາວກະສິກອນ, ອຳນາດການປົກຄອງບ້ານ, ຜູ້ນຳຊຸມຊົນ, ແມ່ຍິງ, ຄອບຄົວຄົນພິການ, ຄອບຄົວແມ່ຮ້າງນາງໝ້າຍ, ຄອບຄົວທຸກຍາກ, ທີມງານໂຄງການ ແລະ ພະນັກງານ-ວິຊາການຈາກຫ້ອງການລັດທີ່ກ່ຽວຂ້ອງ. ການວາງແຜນຮ່ວມກັບຊຸມຊົນຄັ້ງນີ້ເປັນການເກັບຂໍ້ມູນທັງທາງປະລິມານ ແລະ ຄຸນນະພາບ ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບສະພາບ, ບັນຫາ, ຄວາມຕ້ອງການ, ຄວາມປາຖະໜາ, ແລະ ທາງອອກຂອງຊຸມຊົນ ເພື່ອນຳໄປປະກອບເປັນແຜນຈັດຕັ້ງປະຕິບັດໂຄງການ. ກິດຈະກຳນີ້ບໍ່ອາດເປັນໄປໄດ້ຖ້າປາສະຈາກຄູ່ຮ່ວມງານຕ່າງໆ ເຊັ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູກູດ, ໜ່ວຍງານນ້ຳສະອາດ, ຫ້ອງການສະຫະພັນແມ່ຍິງ, ສະມາຄົມຄົນພິການແຫ່ງຊາດລາວ (LDPA), ສະມາຄົມ ພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA), ປະຊາຊົນບ້ານເປົ້າໝາຍ, ແລະ ທີມງານໂຄງການ. ນອກຈາກນີ້ ອົງການ (ADRA) ຂໍຂອບໃຈ ແລະ ສະແດງຄວາມຮູ້ບຸນຄຸນໄປຍັງຜູ້ໃຫ້ທຶນ ກໍຄື BMZ ແລະ ອົງການ ອາດຣາ ເຢຊະມັນ ລວມທັງຄູ່ຮ່ວມງານອື່ນໆສຳລັບການສະໜັບສະໜູນກິດຈະກຳໃນຄັ້ງນີ້ດ້ວຍ.

ບ້ານລັ້ງຈອງ

ທີ່ຕັ້ງບ້ານລັ້ງຈອງ ເມືອງພູກູດ ແຂວງຊຽງຂວາງ.

- ທິດເໜືອຕິດກັບບ້ານບົງ
- ທິດໃຕ້ຕິດກັບບ້ານພູສະງາວ
- ທິດຕາເວັນອອກຕິດກັບບ້ານລ້ອງຮາງ
- ທິດຕາເວັນຕົກຕິດກັບບ້ານວັງໂຕ່ງ

ການຊ່ວຍເຫຼືອ

- ທີ່ຜ່ານມາມີອົງການ/ໂຄງການເຂົ້າມາຊ່ວຍເຫຼືອ ຄື **TABI** (ກິດຈະກຳປູກຫວາຍ, ວັງສະຫວານ, ການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ) ແລະ **Caritas** (ສຸຂາພິບານ, ສຸຂາອະນາໄມ, ສ້າງຂົວ).

ການນຳໃຊ້ນ້ຳຂອງບ້ານ

- ເນື່ອງຈາກນ້ຳລົນຂອງບ້ານຖືກໄພທຳມະຊາດທຳລາຍໃນປີ 2018 ຈຶ່ງແກ້ໄຂໂດຍການຂຸດນ້ຳສ້າງຢູ່ກາງຫ້ວຍນ້ອຍເພື່ອບັນເທົາ ແຕ່ກໍບໍ່ມີນ້ຳພຽງພໍຕໍ່ການຊົມໃຊ້ຂອງຄົນໃນຊຸມຊົນ

ການຄົມມະນາຄົມ

- ເສັ້ນທາງເຂົ້າເຖິງບ້ານແມ່ນມີຄວາມຫຍຸ້ງຍາກ ເຊິ່ງລົດສາມາດເຂົ້າໄດ້ສະເພາະລະດູແລ້ງເທົ່ານັ້ນ

ຄວາມຈຳເປັນ ແລະ ຂໍ້ຫຍຸ້ງຍາກ

1) ບໍ່ມີດິນເຮັດນາ, ມີແຕ່ເຮັດໄຮ່ໝູນວຽນ, ບາງປີບໍ່ກຸ້ມກິນ
2) ຂາດນ້ຳໃຊ້
3) ຂາດວິດຖ່າຍ 16 ຄົນ ທີ່ລ້ຽງເຮືອນໃໝ່
4) ຄົນພິການພາຍໃນບ້ານຫຼາຍຄົນບໍ່ສາມາດເຂົ້າເຖິງການລ້ຽງສັດໄດ້ ແລະ ຕ້ອງການຄວາມຊ່ວຍເຫຼືອ
5) ແມ່ຍິງພາຍໃນບ້ານສ່ວນຫຼາຍເຮັດຫຼາຍໜ້າວຽກ ເຮັດໃຫ້ບໍ່ມີເວລາເບິ່ງແຍງ ແລະ ພັດທະນາຕົນເອງ
6) ໄພພິບັດທາງທຳມະຊາດທຳລາຍຜົນລະປູກຂອງປະຊາຊົນ
7) ປະຊາຊົນຍັງມີຄວາມຮູ້ຈຳກັດດ້ານການປູກຝັງ ແລະ ລ້ຽງສັດ, ເຕັກນິກການປູກ/ລ້ຽງ, ວິທີປ້ອງກັນພະຍາດ ແລະ ວິທີການຮັບມືກັບບັນຫາທີ່ເກີດຂຶ້ນ
8) ເຕັກນິກການຕະຫຼາດຍັງຕ່ຳ ແລະ ບໍ່ມີຕະຫຼາດຈຳໜ່າຍຜົນຜະລິດກະສິກຳຢູ່ບໍລິເວນໃກ້ຄຽງ
9) ການຄຸ້ມຄອງຊັບພະຍາກອນທຳມະຊາດເຮັດບໍ່ໄດ້ດີປານໃດ

ຂໍ້ສະເໜີຂໍຄວາມຊ່ວຍເຫຼືອ

1. ປ້ອແປງນ້ຳລົນ
2. ຫ້ອງນ້ຳ
3. ທໍ່ເອົານ້ຳເຂົ້ານາສຳລັບຜູ້ມີເງື່ອນໄຂ

ປະຊາກອນ

ລວມ ລ້ຽງຈອງ ປະຊາກອນ

951

ເພດຍິງ
454

ເພດຊາຍ
497

ຄອບຄົວ



ການປະກອບອາຊີບ

100%

ຊາວກະສິກອນ

- ປູກຝັງ 179 ຄອບຄົວ (ເຮັດໄຮ່ໝູນວຽນ, ສວນສາລີ, ແລະ ລ້ຽງສັດ (ງົວ, ຄວາຍ, ໝູ, ແບ້, ແລະ ສັດປີກ)

ຄົນພິການ

ຄົນພິການທັງໝົດ 14 ຄົນ



- 3 ພິການສາຍຕາ
- 2 ພິການຫູ/ຄໍ
- 5 ພິການແຂນ/ຂາ
- 4 ພິການສະໝອງ

ສິ່ງອຳນວຍຄວາມສະດວກ

- ມີໂຮງຮຽນປະຖົມ ແລະ ມັດທະຍົມຕົ້ນ
- ມີໄຟຟ້າທີ່ສະດວກ
- ມີຫ້ອງການ ແລະ ສະໂມສອນບ້ານ
- ມີສັນຍານໂທລະສັບ ສາມາດຕິດຕໍ່ກັບໂລກພາຍນອກໄດ້
- ມີຮ້ານຂາຍເຄື່ອງ

ຄົນພິການທັງໝົດ 14 ຄົນ



ຄົນພິການທີ່ເປັນບູລິມະສິດຂອງໂຄງການ 5 ຄົນ

- ຊື່
- ວັນເດືອນປີເກີດ
- ຄວາມພິການ
- ວຽກທີ່ຕ້ອງການເພື່ອສ້າງລາຍຮັບ
- ເຫດຜົນ
- ຈຸດດີ
- ຈຸດອ່ອນ
- ໂອກາດ
- ອຸປະສັກ
- ຜູ້ຫຼັກໃນການເຮັດກິດຈະກຳ

- ນາງ ເນດ
- 09/01/2010
- ດ້ານສະໝອງ ຄືຮັບຮູ້ຊ້າ
- ຢາກລ້ຽງໝູ
- ມີສະຖານທີ່ແລະລ້ຽງງ່າຍ
- ມີສະຖານທີ່
- ຂາດການຝຶກອົບຮົມໃນການ ລ້ຽງສັດ
- ມີຕະຫຼາດຮອງຮັບ
- ພະຍາດຕາມທຳມະຊາດ
- ພໍ່, ແມ່

- ນາງ ສົມ
- 14/01/1997
- ດ້ານຮ່າງກາຍ ຂາເບື້ອງຊ້າຍແຢະ
- ຂະຫຍາຍການລ້ຽງໝູ
- ເຄີຍລ້ຽງຜ່ານມາ ແລະ ມີສະຖານທີ່
- ເຄີຍລ້ຽງຜ່ານມາ
- ບໍ່ເຄີຍຝຶກອົບຮົມການລ້ຽງໝູ
- ມີສິນຄ້າໃນທ້ອງຕະຫຼາດຫຼາຍຂຶ້ນ
- ມັກເກີດພະຍາດຕາມແຕ່ລະປີ
- ຜົວ, ພໍ່, ແມ່

- ນາງ ຄຳແພງ ທິບສະຄອນ
- 04/04/1998
- ດ້ານຫູ/ຄໍ ບໍ່ຮູ້ລົມ
- ຂະຫຍາຍການລ້ຽງໝູ
- ກຳລັງລ້ຽງຢູ່ໃນປະຈຸບັນ
- ເຄີຍລ້ຽງຜ່ານມາ
- ບໍ່ເຄີຍຝຶກອົບຮົມການລ້ຽງໝ
- ມີຄວາມຕ້ອງການຈາກຕະຫຼາດ
- ມັກເກີດພະຍາດອະຫິວາ
- ພໍ່, ແມ່, ນ້ອງສາວ

- ທ້າວ ສົມສີ
- 03/05/1972
- ຕາສອງເບື້ອງເຫັນໜ້ອຍໜຶ່ງ
- ຢາກໄດ້ໝູເພີ່ມ
- ຢາກລ້ຽງໝູເພີ່ມ
- ມີສະຖານທີ່
- ບໍ່ເຄີຍຝຶກອົບຮົມການລ້ຽງໝູ
- ມີສິນຄ້າສູ່ທ້ອງຕະຫຼາດເພີ່ມຂຶ້ນ
- ມັກເກີດພະຍາດອະຫິວາໝູບາງລະດູ
- ເມຍ, ລູກ

- ທ້າວ ຈັນ ແສງພະຈັນ
- 06/12/1981
- ຂາເບື້ອງຊ້າຍແຢະຍ່າງບໍ່ທ່ຽງ
- ຢາກລ້ຽງໝູ
- ເຄີຍລ້ຽງຜ່ານມາ ແລະ ມີສະຖານທີ່
- ມີເຄີຍລ້ຽງ, ມີພື້ນທີ່ສະດວກ
- ບໍ່ເຄີຍຝຶກອົບຮົມການລ້ຽງໝູ
- ມີສິນຄ້າສູ່ທ້ອງຕະຫຼາດຫຼາຍຂຶ້ນ
- ມັກເກີດພະຍາດໃນແຕ່ລະປີ
- ເມຍ, ລູກ

NOTE

ການຄັດເລືອກບູລິມະສິດແມ່ນ ອີງໃສ່ການປະເມີນ ແລະ ຄຳ ແນະນຳຂອງ ສະມາຄົມຄົນ ພິການແຫ່ງຊາດລາວ ແລະ ທ່າ ແຮງຂອງຄົນພິການ

ບົດບາດຍິງ-ຊາຍ

ກິດຈະວັດປະຈຳວັນ

ນອນ	6h	8h	ນອນ
ພັກຜ່ອນ	4h	7h	ພັກຜ່ອນ
ເຮັດວຽກເຮືອນ	5h	0h	ເຮັດວຽກເຮືອນ
ເຮັດວຽກ/ອອກແຮງງານ	9h	9h	ເຮັດວຽກ/ອອກແຮງງານ

ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ



• ໂດຍທົ່ວໄປແລ້ວແມ່ຍິງເປັນຜູ້ກຳເງິນ ແລະ ແບ່ງໃຫ້ຜູ້ຊາຍໃຊ້ໃນສິ່ງຈຳເປັນ ເຊິ່ງປົກກະຕິແລ້ວຜູ້ຊາຍຈະໃຊ້ເງິນເພື່ອຕົນເອງ ຫຼື ງານສັງຄົມ ແລະ ຜູ້ຍິງນຳໃຊ້ເພື່ອຄອບຄົວຫຼາຍກວ່າ

ການເຂົ້າເຖິງ

• ສຳລັບການເຂົ້າເຖິງຊັບພະຍາກອນ ເຫັນວ່າຊັບສິນຫຼາຍຢ່າງແມນທັງຍິງ ແລະ ຊາຍໄດນຳໃຊ້ຮວມກັນ

ການຄວບຄຸມ

• ທັງຍິງແລະຊາຍຄວບຄຸມຊັບສິນທີ່ມີລາຄາບໍ່ສູງ, ສຳລັບຊັບສິນທີ່ມີ ລາຄາສູງ ແມນສອງເພດຕັດສິນໃຈຮວມກັນ. ແຕເຖິງແນວໃດກໍຕາມ, ສຳລັບຊັບສິນເຊັ່ນ ພາຫະນະ ແມນຜູ້ຊາຍເປັນຜູ້ຕັດສິນໃຈຫຼາຍກວ່າ ເນື່ອງຈາກຜູ້ຊາຍເປັນຜູ້ຊົມໃຊ້ ແລະ ຮູ້ຫຼາຍກວ່າຜູ້ຍິງ.

ບັນຫາ ແລະ ສິ່ງທ້າທາຍ

ຄວາມຫຼຸດໂຕນໃນການເຮັດວຽກ ເຮັດໃຫ້ແມ່ຍິງບໍ່ມີເວລາເບິ່ງແຍງ ແລະ ພັດທະນາຕົນເອງເທົ່າທີ່ຄວນ ເຊັ່ນ ແມ່ຍິງຫຼາຍຄົນບໍ່ຮູ້ຂັບລົດ...

ແມ່ຍິງມີຄວາມກ້າຫານຕ່ຳໃນການສະແດງອອກ ສົນທະນາ ແລະ ປະກອບຄຳຄິດຄຳເຫັນ

ບາງຄັ້ງຜູ້ເປັນຜົວເມົາສຸລາ ພາໃຫ້ຜິດຖຽງກັນ ຫຼື ໃຊ້ຄວາມຮຸນແຮງ

ຂໍ້ສະເໜີ

• ກຸ່ມແມ່ຍິງຢາກໃຫ້ຜູ້ຊາຍຊ່ວຍວຽກຕ່າງ ເຊັ່ນ ແຕ່ງກິນ, ໄປຕັກນ້ຳ, ເອົາລູກ, ແລະ ກວາດເຮືອນ

• ຈັດຝຶກອົບຮົມບົດບາດຍິງຊາຍໃຫ້ແກ່ຊຸມຊົນ

ການປູກຝັງ

ລວມ ບ້ານລັ້ງຈອງ ເນື້ອທີ່ທຳການຜະລິດ

55	504	654
ນາ	ໄຮ່ໝູນວຽນ	ສວນ

ນາແມ່ນນຳໃຊ້ນ້ຳຫ້ວຍ, ນ້ຳຝົນ ສ່ວນໄຮ່ ແລະ ສວນແມ່ນນຳໃຊ້ພຽງນ້ຳຝົນ

ເດືອນທີ່ເໝາະສົມແກ່ການປູກຝັງ

5-7
ກ້ວຍ, ໝາກນັດ, ອອຍ, ຄ້ວດິນ...

5-10
ໝາກເຜັດ, ໝາກເຂືອ, ໝາກແຕງ, ໝາກອຶ...

11-3
ກະລ່ຳປີ, ກະທຽມ...

5-8
ຕົ້ນໄມ້ໃຫ້ໝາກ

5-11
ເຂົ້າ, ສາລີ, ພືດປະເພດມັນ, ປູກ

11-5
ຜັກສວນຄົວ...

ບັນຫາໃນການປູກຝັງ

ການບໍລິໂພກ

- ຊາວບ້ານເຮັດໄຮ່, ເຮັດນາປູກເຂົ້າກິນເອງ
- ຊາວບ້ານປູກພືດຜັກກິນເອງ

ເຂົ້າບໍ່ກຸ້ມກິນຫຼາຍຄອບຄົວຍ້ອນໄພທຳມະຊາດ (ນ້ຳຖ້ວມ)

ເຂົ້ານາ	ເຂົ້າໄຮ່	ພືດສວນຄົວ	ພືດເສດຖະກິດ
ສັດຕູພືດທຳລາຍ	ສັດຕູພືດທຳລາຍ	ສັດຕູພືດທຳລາຍ	ສັດຕູພືດທຳລາຍ
ນ້ຳບໍ່ພຽງພໍ	ແຫ້ງແລ້ງ	ເກີດໄພທຳມະຊາດ	ນ້ຳບໍ່ພຽງພໍ
ເກີດໄພທຳມະຊາດ		ປູກຍາກໃນໄລຍະດູຝົນ	ເກີດໄພທຳມະຊາດ

ເຕັກນິກການປູກພືດ

ຊາວບ້ານບາງຄອບຄົວເຄີຍນຳໃຊ້ສານເຄມີເຂົ້າໃນການປູກພືດ ແຕ່ປະຈຸບັນຫັນມານຳໃຊ້ຝຸ່ນທຳມະຊາດທົດແທນ.

ເຕັກນິກການປູກຝັງ

ໄດ້ມີການນຳໃຊ້ກົນຈັກເຂົ້າໃນການເຮັດນາ ແລະ ສວນສາລີ (ບາງເຈົ້າທີ່ມີທຶນຮອນ)



ການປັກດຳ ຫຼື ປູກ ແລະ ການເກັບກຽວແມ່ນຍັງນຳໃຊ້ແຮງງານຄົນ

ການປູກຝັງ

ສັງລວມບັນຫາຂອງການປູກຝັງ

- ໄພທຳມະຊາດ (ຝົນຕົກໜັກ, ແຫ້ງແລ້ງ, ແລະ ດິນເຈື່ອນ)
- ມີສັດສັດຕູພືດທຳລາຍຜົນລະປູກ
- ຂາດກ້ານຄຸ້ມຄອງການຜະລິດແບບເປັນກອນກຸ່ມ
- ຂາດເຕັກນິກໃນການປູກ ໂດຍສະເພາະການປູກຜັກລະດູຝົນ
- ຂາດຕະຫຼາດຈຳໜ່າຍ ແລະ ເຕັກນິກການຕະຫຼາດ
- ເສັ້ນທາງບໍ່ສະດວກ

ຂໍ້ສະເໜີ

- ຈັດເຝິກອົບຮົມວິທີການປ້ອງກັນ ແລະ ຮັບມືກັບໄພທຳມະຊາດ
- ຝຶກອົບຮົມເຕັກນິກການປູກ, ເຮັດຝຸ່ນບົ່ມ, ຝຸ່ນຊີວະພາບ ແລະ ຝຶກອົບຮົມວິທີຜະລິດຢາຂັບໄລ່ແມງໄມ້ ແລະ ຢາປາບສັດຕູພືດແບບຊີວະພາບ
- ເຝິກອົບຮົມເຕັກນິກການປູກພືດໃນລະດູຝົນ (ເຮືອນຮົ່ມ) ແລະ ການຂະຫຍາຍຕົ້ນໝາກໄມ້ ພ້ອມທັງສະໜອງອຸປະກອນ ໂດຍຄຳນຶງເຖິງສິ່ງທ້າທາຍຕ່າງໆ
- ເຝິກອົບຮົມ ແລະ ຈັດຕັ້ງກຸ່ມກະສິກຳ
- ກຳນົດຕະຫຼາດຈຳໜ່າຍ, ເຊື່ອມຕໍ່ກຸ່ມກະສິກຳກັບຕະຫຼາດຈຳໜ່າຍ ແລະ ເຝິກອົບຮົມດ້ານການຕະຫຼາດໃຫ້ປະຊາຊົນ

ການລ້ຽງສັດ

ຈຳນວນສັດພາຍໃນບ້ານ



ເນື້ອທີ່ລ້ຽງສັດ

- ໝອງປາບຸກເບີກແລ້ວ 13 ໝອງ

ພາຍໃນບ້ານມີສັດຕະວະແພດ ປະຈຳບ້ານ ແລະ ທີ່ຜ່ານມາງົວ ຄວາຍຂອງຊາວບ້ານແມ່ນເຄີຍ ໄດ້ຮັບການຊັກຢາປ້ອງກັນ ພະຍາດ 2 ຄັ້ງ/ປີ

ເດືອນທີ່ເໝາະສົມໃນການລ້ຽງສັດ

ສັດ	ມັງກອນ	ກຸມພາ	ມີນາ	ເມສາ	ພຶດສະພາ	ມິຖຸນາ	ກໍລະກົດ	ສິງຫາ	ກັນຍາ	ຕຸລາ	ພະຈິກ	ທັນວາ
ງົວ												
ຄວາຍ												
ແບ້												
ປາ												
ເປັດ-ໄກ່												
ໝູ												

ເຕັກນິກ ແລະ ບັນຫາໃນການລ້ຽງສັດ

	ເຕັກນິກ	ບັນຫາ
ງົວ, ຄວາຍ	ລ້ຽງແບບປ່ອຍຫາກິນຕາມທຳມະຊາດ	ງົວຄວາຍຕາຍ, ຫຍ້າບໍ່ພຽງພໍ, ຢາປ້ອ ພະຍາດສັດມີຈຳກັດ, ບໍ່ມີຄວາມຮູ້ດ້ານ ສັດຕະວະແພດ
ໝູ	ລ້ຽງແບບຂັງໃສ່ຄອກ	ໝູຕາຍ, ຢາປ້ອພະຍາດສັດມີຈຳກັດ, ບໍ່ມີ ຄວາມຮູ້ດ້ານສັດຕະວະແພດ
ປາ	ລ້ຽງໃສ່ໝອງດິນໃຫ້ປາຫາກິນຕາມ ທຳມະຊາດ	ປາມີການຈະເລີນເຕີບໂຕຊ້າ, ບໍ່ໄດ້ຮັບຜົນດີ ເທົ່າທີ່ຄວນ

ການລ້ຽງສັດ

ສັງລວມເຕັກນິກການລ້ຽງສັດ

ເມື່ອກ່ອນ

- ລ້ຽງແບບປ່ອຍໄປຕາມ ທຳມະຊາດ ຕາມເປັນຕາມເກີດ ປ່ອຍສັດເຂົ້າປາ ແລະ ດົນໆຈຶ່ງ ນຳໄປເບິ່ງເທື່ອໜຶ່ງ.
- ບໍ່ມີແບບແຜນການເຮັດວຽກ.
- ບໍ່ໄດ້ຮັບຜົນດີປານໃດ, ລຽງ ຫຼາຍແຕ່ລາຍຮັບໄດ້ໜ້ອຍ.

ປະຈຸບັນ

- ລ້ຽງແບບເຄິ່ງທຳມະຊາດ (ເຄິ່ງຂັ້ງເຄິ່ງປ່ອຍ).
- ບາງຄັ້ງ ຫຼື ບາງໄລຍະມີການສັກ ຢາປ້ອງກັນ ແລະ ສັກຢາປິ່ນປົວສັດ ເວລາສັດເປັນພະຍາດ.
- ມີການສ່າງສວນຫຍ້າ, ຄັງລ້ຽງ ສັດ, ມີການຈັດສັນເຂດລ້ຽງສັດ ພາຍໃນບ້ານ
- ດູແລສັດທຸກວັນ

ສັງລວມຂໍ້ສະດວກ ແລະ ເງື່ອນໄຂໃນການລ້ຽງສັດ

- ມີເນື້ອທີ່ພຽງພໍ ແລະ ເໝາະສົມ ໃນການລ້ຽງສັດທຸກຊະນິດ
- ມີທົ່ງຫຍ້າທຳມະຊາດເພື່ອ ຮັບຮອງ ແລະ ບັນເທົາທາງດ້ານ ອາຫານສັດໃນລະດູແລ້ງ
- ມີສວນຫຍ້າເປັນຂອງຕົນເອງ (ບາງຄອບຄົວ).

- ມີແຫຼ່ງນ້ຳ, ຫ້ວຍນ້ຳ ຕະຫຼອດປີ.

ສັງລວມບັນຫາ ແລະ ຂໍ້ຫຍຸ້ງຍາກ

- ພະຍາດມັກເກີດຂຶ້ນກັບສັດລ້ຽງ ໃນທຸກໆປີ.

- ປະຊາຊົນບາງຄອບຄົວບໍ່ມີຕົ້ນ ທຶນ ໃນການລ້ຽງ

- ຍັງບໍ່ລ້ຽງສັດໃນເຂດທີ່ຈັດສັນຂອງ ບ້ານເທົ່າທີ່ຄວນ.
- ເຕັກນິກການຄຸ້ມຄອງສວນຫຍ້າຍັງ ບໍ່ທັນໄດ້ດີເທົ່າທີ່ຄວນ
- ການດູແລສຸຂະພາບສັດຍັງບໍ່ທັນໄດ້ ເອົາໃຈໃສ່ເທົ່າທີ່ຄວນ
- ຂາດເຕັກນິກດ້ານສັດຕະວະແພດ

ຂໍ້ສະເໜີ

- ເຝິກອົບຮົມການດູແລສຸຂະພາບສັດ, ເຝິກອົບຮົມ ສັດຕະວະແພດ, ສັກຢາປ້ອງກັນສັດຕາມເວລາທີ່ກຳນົດ ແລະ ຕໍ່ເນື່ອງ.
- ຂັ້ນບ້ານຄວນກຳນົດລະບຽບການຄຸ້ມຄອງສັດຂັ້ນບ້ານ
- ສະໜອງສັດ ແລະ ແກນຫຍ້າໃຫ້ຄອບຄົວທຸກຍາກ.
- ເຝິກອົບຮົມເຕັກນິກການລ້ຽງສັດ ແລະ ການຄຸ້ມຄອງ ສວນຫຍ້າ.
- ຈຳກັດບໍ່ໃຫ້ເຄື່ອນຍ້າຍສັດເຂົ້າ-ອອກໃນເວລາສັດ ເປັນພະຍາດ.

ອາຫານຈາກທຳມະຊາດ

ອາຫານຈາກທຳມະຊາດ ຫຼື ເຄື່ອງປ່າຂອງດົງ

1-12

ຜັກກູດ, ຜັກອີເລີດ, ຜັກຄຸດ, ຜັກຄາວ ທອງ, ຜັກໝອກ, ຜັກແວນ, ຜັກຫົ້ມ

ປູ, ປາ, ກຸ້ງ, ແລະ ຫອຍ

ໝູປ່າ, ເຫງົ້ນ, ໄກ່ປ່າ, ໄກ່ຂວາ, ນົກ, ໝູ, ກະຮອກ

ດອກເຜົ້ງ, ປອມ 30

2-3

ຮວກ

3-4

ຜັກຫວານ ແລະ ຜັກເນົ່າ

4-5

ນ້ຳເຜົ້ງ

6-7

ກົບ, ຂຽດ

7-8

ເຫັດ

7-10

ໝໍ່ໄມ້

9-10

ຕໍ່

11-2

ໄຄ ແລະ ເຫົ້າ

- ເດືອນທີ່ສາມາດຫາອາຫານໄດ້
- ມີແຕ່ກິນ
- ມີແຕ່ຂາຍ
- ທັງກິນແລະຂາຍ

ບັນຫາຂອງອາຫານຈາກທຳມະຊາດ

ປະຊາກອນເພີ່ມຂຶ້ນ, ການຫາກິນແບບດັບສູນ ເຮັດໃຫ້ອາຫານນັບມື້ນັບຫຼຸດລົງ

ປ່າໄມ້ຖືກທຳລາຍ

ໄພທຳມະຊາດ (ຝົນຕົກໜັກ, ແຫ້ງແລ້ງ, ແລະ ດິນເຈື່ອນ)

ບໍ່ມີການຊອກຫາວິທີປູກ ຫຼື ຂະຫຍາຍພັນທົດແທນ

ວິທີການແກ້ໄຂ

ອະນຸລັກຕົ້ນໄມ້ ແລະ ປູກປ່າທົດແທນ

ຫັນມາປູຝັງ ແລະ ລ້ຽງສັດເພື່ອ ລ້ຽງຊີບ ແລະ ສ້າງເສດຖະກິດ

DO'S

- ສ້າງກົດລະບຽບເພື່ອສະຫງວນ ທຳມະຊາດຂັ້ນບ້ານ
- ສ້າງກົດລະບຽບຂັ້ນບ້ານ ເພື່ອກຳນົດເຂດຫາກິນສຳລັບແຕ່ລະປີ ແລະ ຫ້າມບໍ່ໃຫ້ລ່າສັດໃນລະດູ ຂະຫຍາຍພັນ

DON'TS

ຊອກຫາວິທີປູກ ຫຼື ຂະຫຍາຍພັນ ເຄື່ອງປ່າຂອງດົງ

ລາຄາສິນຄ້າພາຍໃນບ້ານ

ລາຄາ**ຜົນລະປູກ**

ເຂົ້າເປືອກ
2,500
ກີບ/ກິໂລ

ເຂົ້າສານ
5,000
ກີບ/ກິໂລ

ໝາກເຜັດດິບ
10,000
ກີບ/ກິໂລ

ໝາກອຶ
1,000
ກີບ/ກິໂລ

ໝາກແຕງ
500
ກີບ/ກິໂລ

ໝາກເຜັດແຫ້ງ
40,000
ກີບ/ກິໂລ

ສາລີ
9-1,000
ກີບ/ກິໂລ

ລາຄາ**ສັດ ແລະ ຊີ້ນສັດ**

ງົວ
6,000,000
ກີບ/ໂຕ

ຊີ້ນງົວ
40,000
ກີບ/ກິໂລ

ປາເກັດລ້ຽງ
20,000
ກີບ/ກິໂລ

ໝູນ້ອຍ
200,000
ກີບ/ໂຕ

ຊີ້ນໝູ
35,000
ກີບ/ກິໂລ

ເປັດ-ໄກ່
60,000
ກີບ/ໂຕ

ການວິເຄາະ SWOT ຂອງບ້ານ

ທ່າແຮງ

1. ບ້ານຕັ້ງຕິດກັບແມ່ນ້ຳ (ນ້ຳຮາງ): ມີນ້ຳພຽງພໍສຳລັບລ້ຽງສັດ, ທຳການຜະລິດ, ແລະ ການຂົນສົ່ງທາງນ້ຳໃນລະດູຝົນ
2. ມີທາງເຂົ້າອອກເສັ້ນດຽວ ຕິດຈອດກັບແຂວງຫຼວງພະບາງ: ສະດວກຕໍ່ການຄວບຄຸມພະຍາດສັດ
3. ມີໄຟຟ້າໃຊ້ສະດວກ
4. ມີສັນຍານໂທລະສັບ ສາມາດຕິດຕໍ່ກັບໂລກພາຍນອກໄດ້
5. ດິນເໝາະສົມແກ່ການປູກສາລີເປັນສິນຄ້າ ແລະ ການປູກຫຍ້າອາຫານສັດ
6. ມີສິ່ງອຳນວຍຄວາມສະດວກ: ມີໂຮງຮຽນປະຖົມ, ມັດທະຍົມຕົ້ນ, ຫ້ອງການບ້ານ, ສະໂມສອນບ້ານ, ຮ້ານຂາຍເຄື່ອງຍ່ອຍ
7. ມີຜູ້ເກັບຊື້ເຄື່ອງປ່າຂອງດົງ (ປອມ 30)
8. ມີແມ່ຄ້າ ພໍ່ຄ້າມາຊື້ສັດ ແລະ ຜົນຜະລິດຮອດບ້ານ
9. ຄະນະບ້ານມີຄວາມເຂັ້ມແຂງ
10. ມີການແບ່ງດິນແບ່ງປ່າ (ໂຄງການ TABI) : ດິນກະສິກຳ, ດິນບ້ານ, ປ່າສະຫງວນ, ປ່າຊົມໃຊ້, ວັງ

ຈຸດອ່ອນ

1. ສວນຜັກຕັ້ງຢູ່ນອກບ້ານ ຫຼື ແຄມນ້ຳຮາງ ຍ້ອນດິນເຮືອນຈຳກັດ ເຊິ່ງນຳໃຊ້ໄດ້ພຽງລະດູແລ້ງ ເນື່ອງຈາກລະດູຝົນນ້ຳຖ້ວມ.
2. ເຂດບ້ານມີພູຫຼາຍ ບໍ່ເໝາະສົມສຳລັບສວນຜັກໃນລະດູແລ້ງ ຍ້ອນຂາດນ້ຳ.
3. ຂາດນ້ຳໃຊ້: ນ້ຳລິນຂອງຊາວບ້ານເປ່ເພຍ້ອນໄພທຳມະຊາດໃນປີ 2018 ແລະ ຍັງບໍ່ໄດ້ຮັບການປົວແປງ ປະຊາຊົນຕ້ອງໄດ້ລົງໄປໃຊ້ນ້ຳຮາງ (ບາງຄອບຄົວນຳເອົາມາກິນພ້ອມ) ເຊິ່ງບ້ານຕົ້ນນ້ຳກໍນຳໃຊ້ເຊັ່ນກັນ.
4. ສຳລັບນ້ຳກິນປະຊາຊົນພາກັນຂວັດຂຸມຢູ່ລຳຫ້ວຍນ້ອຍ ແລະ ທຽວໄປຕັກເອົາມາກິນ. ຂຸມນ້ຳນີ້ຈະບໍ່ສາມາດນຳໃຊ້ໄດ້ໃນລະດູຝົນ ຍ້ອນນ້ຳຖ້ວມ.
5. ເສັ້ນທາງເຂົ້າອອກບ້ານມີຄວາມຫຍຸ້ງຍາກ, ຄຸ້ມລັງ ຈອງຕັ້ງຢູ່ນ້ຳຮາງ ແລະ ມີຂ້ວອູ່ນ້ອຍ ເຮັດໃຫ້ເຂົ້າອອກບໍ່ສະດວກ ໂດຍສະເພາະລະດູຝົນ.
6. ເນື້ອທີ່ນາໜ້ອຍ
7. ບໍ່ມີຕະຫຼາດໃນບໍລິເວນໃກ້ຄຽງ
8. ຂາດການຈັດຕັ້ງກຸ່ມກະສິກຳ
9. ຍັງຮັກສາສຸຂະອະນາໄມບໍ່ໄດ້: ຖິ້ມຂີ້ເຫຍື້ອຊະຊາຍ
10. ລ້ຽງໝູຢູ່ແຄມບ້ານ/ແຄມນ້ຳ

SWOT

ໂອກາດ

1. ການລ້ຽງສັດເປັນສິນຄ້າ: ບ້ານມີສະຖານທີ່, ນ້ຳ, ແລະ ອາຫານ ເໝາະສົມສຳລັບການລ້ຽງສັດໃຫຍ່
2. ປູກຜັດເປັນສິນຄ້າ: ສາລີ ແລະ ໝາກໄມ້
3. ການລ້ຽງສັດໃຫຍ່: ງົວ, ຄວາຍ, ແບ້, ແລະ ໝູ
4. ຈັດຕັ້ງກຸ່ມກະສິກຳ (ປູກຝັງ ແລະ ລ້ຽງສັດ)
5. ພັດທະນາການປູກຜັກລະດູຝົນ
6. ສ້າງຄວາມເຂັ້ມແຂງດ້ານການບໍລິຫານການເງິນ ຄອບຄົວໃຫ້ແກ່ແມ່ຍິງ

ສິ່ງຄຸກຄາມ

1. ໄພພິບັດ: ນ້ຳຖ້ວມ, ໄພແຫ້ງແລ້ງ, ແລະ ດິນເຈື່ອນ (ບ້ານຕັ້ງຢູ່ແຄມນ້ຳ)
2. ນ້ຳຮາງແຫ້ງຍ້ອນການປ່ຽນແປງສະພາບອາກາດ
3. ພະຍາດສັດ: ບາງປີສັດລ້ຽງເກີດພະຍາດຮ້າຍແຮງ (ງົວ, ຄວາຍ); ພະຍາດສັດປີທີ່ລ້ຽງພາຍໃນບ້ານ ຄວບຄຸມໄດ້ຍາກຍ້ອນເຮືອນຕິດກັນໂພດ
4. ສັດຕູພືດ: ບີ້ງກິນສາລີ, ແມງໄມ້, ເພ້ຍ, ໝູ, ແລະ ອື່ນໆ
5. ການເໜັງຕີງຂອງລາຄາຜົນຜະລິດ ເປັນຕົ້ນສາລີ, ເຂົ້າ, ແລະ ຊີ້ນ ເຊິ່ງອາດຈະເຮັດຜູ້ຜະລິດຂາດກຳລັງໃຈໃນການຜະລິດ
6. ການເພີ່ມຂຶ້ນຂອງປະຊາກອນ ເຊິ່ງຍິ່ງຈະເຮັດໃຫ້ສະຖານທີ່ປຸກເຮືອນແຄບເຂົ້າກວ່າເກົ່າ ແລະ ການຊົມໃຊ້ຊັບພະຍາກອນເພີ່ມຂຶ້ນ